ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ຫ້ອງການ

ເລກທີ 297/ຫກ

ນະຄອນຫຼວງວຽງຈັນ,ວັນທີ: 27 FEB 2024

# ໜັງສືແຈ້ງເຊີນການປະມູນ

ກະຊວງການຕ່າງປະເທດ ຂໍເຊີນບັນດາ ບໍລິສັດ/ຫ້າງຮ້ານ ທີ່ມີຄວາມສົນໃຈ ທີ່ມີຄຸນວຸດທິເໝາະສົມເຂົ້າຍື່ນຊອງປະມູນ ໃນວຽກບໍລິການອານາໄມ ຂອງກະຊວງການຕ່າງ ປະເທດ.

ການປະມູນຈະໄດ້ດຳເນີນຕາມຂັ້ນຕອນການເປີດກວ້າງທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້ -ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

**ການປະມູນນີ້ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນວຸດທິເໝາະສົມ.**

1. ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ໂດຍການຍື່ນໜັງສືສະເໜີ ທີ່ຢູ່ຂ້າງລຸ່ມນີ້ ເລີ້ມແຕ່ວັນທີ 29 ກຸມພາ 2024- ວັນທີ 07 ມີນາ 2024 ເປັນຕົ້ນໄປໃນລາຄາຊອງລະ 500.000 ກີບ, ເງິນຈຳນວນດັ່ງກ່າວຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
2. ຊອງປະມູນຕ້ອງສົ່ງຕາມສະຖານທີ່ລຸ່ມນີ້ ໃນເວລາ 13:30 ໂມງ ໃນວັນທີ 29 ມີນາ 2024, ສຳລັບຊອງປະມູນ ທີ່ສົ່ງຜ່ານທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ຊັກຊ້າກ່ອນເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 29 ມີນາ 2024 ທີ່ຫ້ອງປະຊຸມຊັ້ນ 3 ຕຶກ B ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງບໍລິສັດຜູ້ທີ່ເຂົ້າຮ່ວມປະມູນ.
3. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນດ້ວຍກຽດ ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຄ້ຳປະກັນບໍ່ໃຫ້ຫລຸດ 2 % ຂອງລາຄາປະມູນມາພ້ອມ.
   - ທີ່ຢູ່ທີ່ລະບຸໄວ້ໃນຂ້າງເທິງແມ່ນ:

   ພະແນກບໍລິຫານ, ຫ້ອງການ, ກະຊວງການຕ່າງປະເທດ

   ຖະໜົນ 23 ສິງຫາ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ. ໂທ:021: 416572, 020 22222 587.

ດັ່ງນັ້ນ, ຈຶ່ງໄດ້ກຳນົດເງື່ອນໄຂສະບັບນີ້ໄວ້ເພື່ອເປັນຫຼັກຖານ.

ແທນ ຫົວໜ້າຫ້ອງການ

ກະຊວງການຕ່າງປະເທດ ຫ້ອງການ

ວອນຄຳ ເຈື່ອງມະນີວົງ